# ບົດບັນທຶກ

## ກອງປະຊຸມຄະນະກໍາມະການຮ່ວມມື ຮັກສາຄວາມສະຫງົບຮຽບຮ້ອຍ ຕາມຊາຍແດນລາວ-ໄທ, ແຂວງໄຊຍະບູລີ-ຈັງຫວັດອຸດຕະລະດິດ ຄັ້ງທີ VI ວັນທີ 17 ສິງຫາ 2013 ທີ່ແຂວງໄຊຍະບູລີ ສ ປ ປ ລາວ

~~~~~~~~~~~~~~~

1. ກອງປະຊຸມຄະນະກໍາມະການຮ່ວມມື ຮັກສາຄວາມສະຫງົບຮຽບຮ້ອຍຕາມຊາຍແດນ ລາວ-ໄທ, ແຂວງໄຊຍະບູລີ-ຈັງຫວັດອຸດຕະລະດິດ ຄັ້ງທີ VI ໄດ້ໄຂຂຶ້ນໃນວັນທີ 17 ສິງຫາ 2013 ທີ່ຫ້ອງວ່າການປົກຄອງແຂວງໄຊຍະບູລີ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ຕາມຄໍາເຊີນຂອງທ່ານ ດຣ. ລຽນ ທິແກ້ວ ເຈົ້າແຂວງໄຊຍະບູລີ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ.

2. ຄະນະກໍາມະການຝ່າຍລາວ ນໍາໂດຍທ່ານ ດຣ. ລຽນ ທິແກ້ວ ເຈົ້າແຂວງໄຊຍະບູລີ ປະທານຄະນະກໍາມະການຮ່ວມມື ຮັກສາຄວາມສະຫງົບຮຽບຮ້ອຍຕາມຊາຍແດນ ລາວ-ໄທ, ແຂວງໄຊຍະບູລີ ເປັນຫົວໜ້າຄະນະຜູ້ແທນ ແລະປະທານຮ່ວມຝ່າຍລາວ. ຄະນະກໍາມະການຝ່າຍໄທ ນໍາໂດຍທ່ານ ສະເຫຼີມໄຊ ເຟື່ອງຄອນ ຜູ້ວ່າຣາຊະການຈັງຫວັດອຸດຕະລະດິດ ປະທານຄະນະກໍາມະການຮ່ວມມື ຮັກສາຄວາມສະຫງົບຮຽບຮ້ອຍຕາມຊາຍແດນ ໄທ-ລາວ, ຈັງຫວັດອຸດຕະລະດິດ ເປັນຫົວໜ້າຄະນະຜູ້ແທນ ແລະ ປະທານຮ່ວມຝ່າຍໄທ.
(ລາຍຊື່ຄະນະກໍາມະການທັງສອງຝ່າຍ ຕາມເອກະສານຄັດຕິດໝາຍເລກ 1 ແລະ 2 ຕາມລໍາດັບ, ຄໍາປາໄສກ່າວໄຂກອງປະຊຸມຂອງປະທານຮ່ວມທັງສອງຝ່າຍ ໄດ້ປະກົດໃນເອກະສານຄັດຕິດໝາຍເລກ 3 ແລະ 4 ຕາມລໍາດັບ).

3. ທັງສອງຝ່າຍ ໄດ້ຜັດປ່ຽນກັນທົບທວນ ການຈັດຕັ້ງປະຕິບັດບົດບັນທຶກກອງປະຊຸມ ຄັ້ງທີ V ເມື່ອວັນທີ 14 ກໍລະກົດ 2005 ທີ່ຈັງຫວັດອຸດຕະລະດິດ ຣາຊະອານາຈັກໄທທີ່ຜ່ານມາ ແລະຜົນຂອງການຮ່ວມມືລະຫວ່າງແຂວງ ແລະຈັງຫວັດ. ທັງສອງຝ່າຍໄດ້ຮັບຊາບວ່າ ການຮ່ວມມືລາວ-ໄທ, ໄທ-ລາວ ລະຫວ່າງແຂວງໄຊຍະບູລີ-ຈັງຫວັດອຸດຕະລະດິດ ມີຄວາມສະຫງົບຮຽບຮ້ອຍດີຂຶ້ນ, ການໄປ-ມາຫາສູ່ກັນ, ການແລກປ່ຽນຊື້-ຂາຍ, ການທ່ອງທ່ຽວ, ການແລກປ່ຽນດ້ານສາທາລະນະສຸກ, ວັດທະນະທໍາ ລະຫວ່າງປະຊາຊົນສອງຝ່າຍມີການພັດທະນາດີຂຶ້ນ, ເມື່ອມີຂໍ້ຂັດແຍ່ງເກີດຂຶ້ນ ທັງສອງຝ່າຍໄດ້ຮ່ວມມືແກ້ໄຂຢ່າງທັນການ.

4. ກອງປະຊຸມໄດ້ສະແດງຄວາມຍິນດີ ຕໍ່ເຈດຕະນາຂອງລັດຖະບານສອງປະເທດ ທີ່ສະໜັບສະໜູນການພົວພັນຮ່ວມມືລາວ-ໄທ, ໄທ-ລາວ ໃຫ້ນັບມື້ນັບດີຂຶ້ນ ແລະຂະຫຍາຍການຮ່ວມມືໃຫ້ກວ້າງຂວາງໃນຫຼາຍດ້ານທັງດ້ານເສດຖະກິດ, ສັງຄົມ, ວັດທະນະທໍາ, ກິລາ ເພື່ອສ້າງຄວາມເຂົ້າໃຈລະຫວ່າງປະຊາຊົນຂອງທັງສອງປະເທດຫຼາຍຂຶ້ນຢ່າງຕໍ່ເນື່ອງ; ພ້ອມກັນນັ້ນ ຄະນະກໍາມະການຮ່ວມມື ຮັກສາຄວາມສະຫງົບຮຽບຮ້ອຍຕາມຊາຍແດນທົ່ວໄປ ລາວ-ໄທ, ແຂວງ-ຈັງຫວັດ ໄດ້ຕັ້ງໜ້າປະຕິບັດໜ້າທີ່ຂອງຕົນດ້ວຍຄວາມຮັບຜິດຊອບ ເພື່ອສັນຕິພາບ ແລະຄວາມຈະເລີນຮຸ່ງເຮືອງຂອງສອງປະເທດ ແລະໃນອະນຸພາກພື້ນ.

5. ກອງປະຊຸມສະແດງຄວາມຍິນດີ ຕໍ່ການແລກປ່ຽນຢ້ຽມຢາມລະດັບສູງລະຫວ່າງກັນ ເປັນຕົ້ນແມ່ນ: ການສະເດັດຢ້ຽມຢາມແຂວງສະຫວັນນະເຂດ ໃນໂອກາດເປັນປະທານຮ່ວມພິທີເປີດຂົວມິດຕະພາບ 2 (ສະຫວັນນະເຂດ-ມຸກດາຫານ) ໃນວັນທີ 20 ທັນວາ 2006, ການຢ້ຽມຢາມແຂວງຈໍາປາສັກ ເພື່ອຕິດຕາມເບິ່ງຄວາມຄືບໜ້າຂອງໂຄງການທົດລອງກະສິກໍາແບບປະສົມປະສານ ທີ່ມະຫາວິທະຍາໄລຈໍາປາສັກ ພາຍໃຕ້ການຮ່ວມມືຂອງມູນນິທິໄຊພັດທະນາ ໃນວັນທີ 11 ກຸມພາ 2010, ການສະເດັດເປັນປະທານຮ່ວມພິທີເປີດການນໍາໃຊ້ຂົວມິດຕະພາບ 3 (ຄໍາມ່ວນ-ນະຄອນພະນົມ) ແລະຢ້ຽມຢາມແຂວງຄໍາມ່ວນ ໃນວັນທີ 11 ພະຈິກ 2011, ການຢ້ຽມຢາມລາວຢ່າງເປັນທາງການ ໃນໂອກາດເຂົ້າຢ້ຽມຂໍານັບພະນະທ່ານ ຈູມມະລີ ໄຊຍະສອນ ປະທານປະເທດແຫ່ງສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ແລະຢ້ຽມຢາມ 3 ແຂວງພາກໃຕ້ຂອງລາວ ລະຫວ່າງວັນທີ 30-31 ພຶດສະພາ 2013 ຂອງສົມເດັດພະເທບພະຣັດຣາຊະສຸດາສະຫຍາມບໍຣົມຣາຊະກຸມມາລີ; ການຢ້ຽມຢາມທາງລັດຖະກິດທີ່ຣາ
~~~~~~~~~~~~~~~

ຊະອານາຈັກໄທ ລະຫວ່າງວັນທີ 12-14 ພຶດສະພາ 2009 ຂອງພະນະທ່ານ ຈູມມະລີ ໄຊຍະສອນ ປະທານປະເທດແຫ່ງສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ພ້ອມພັນລະຍາ ໃນຖານະພະຣາຊະອາຄັນຕຸກະຂອງພະເຈົ້າມະຫາຊີວິດ ແລະພະຣາຊີນີ ແຫ່ງຣາຊະອານາຈັກໄທ; ການເຂົ້າຮ່ວມພິທີເປີດງານມະຫາກຳກິລາຊີເກມ ຄັ້ງທີ 25 ທີ່ນະຄອນຫຼວງວຽງຈັນ ໃນວັນທີ 9 ທັນວາ 2009, ການເຂົ້າຮ່ວມພິທີເປີດໃຊ້ໂຄງການໄຟຟ້ານ້ຳເທີນ II ຢ່າງເປັນທາງການ ແລະພິທີເປີດນຳໃຊ້ໄຟເບືອງທາງ ຈາກຂົວມິດຕະພາບລາວ-ໄທ ໄປຫາສາມແຍກຈິ່ນາຍໂມ້ ໃນວັນທີ 9 ທັນວາ 2010 ຂອງພະນະທ່ານ ອະພິສິດ ເວດຊາຊີວະ ນາຍົກລັດຖະມົນຕີແຫ່ງຣາຊະອານາຈັກໄທ; ການເຂົ້າຮ່ວມກອງປະຊຸມສຸດຍອດຜູ້ນຳປະເທດອະນຸພາກພື້ນລຸ່ມແມ່ນ້ຳຂອງ ຄັ້ງທີ 1 ທີ່ຈັງຫວັດເພັດບູລີ ລະຫວ່າງວັນທີ 2-5 ເມສາ 2010 ຂອງພະນະທ່ານ ບົວສອນ ບຸບຜາວັນ ນາຍົກລັດຖະມົນຕີແຫ່ງສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ; ການເຂົ້າຮ່ວມກອງປະຊຸມເວທີເສດຖະກິດໂລກວ່າດ້ວຍອາຊີຕາເວັນອອກ (World Economic Forum on East Asia) ຄັ້ງທີ 21 ທີ່ກຸງເທບມະຫານະຄອນ ລະຫວ່າງວັນທີ 31 ພຶດສະພາ ຫາ ວັນທີ 1 ມິຖຸນາ 2012, ການຢ້ຽມຢາມຣາຊະອານາຈັກໄທຢ່າງເປັນທາງການໃນໂອກາດເຂົ້າຢ້ຽມຂໍ່ານັບພະບາດສົມເດັດພະເຈົ້າຢູ່ຫົວ, ສົມເດັດພະເທບພະຣັດຣາຊະສຸດາສະຫຍາມບໍຣົມຣາຊະກຸມມາລີ ໃນວັນທີ 2 ມິຖຸນາ 2012, ການເຂົ້າຮ່ວມກອງປະຊຸມຄະນະລັດຖະບານຮ່ວມລາວ-ໄທບໍ່ເປັນທາງການ ຄັ້ງທີ 2 ແລະກອງປະຊຸມຜູ້ນຳດ້ານນ້ຳແຫ່ງພາກພື້ນອາຊີ-ປາຊີຟິກ ຄັ້ງທີ 2 ທີ່ຈັງຫວັດຊຽງໃໝ່ ລະຫວ່າງວັນທີ 19-20 ພຶດສະພາ 2013 ຂອງພະນະທ່ານ ທອງສິງ ທຳມະວົງ ນາຍົກລັດຖະມົນຕີແຫ່ງສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ; ການຢ້ຽມຢາມສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ຢ່າງເປັນທາງການ ໃນວັນທີ 16 ກັນຍາ 2011, ການເຂົ້າຮ່ວມກອງປະຊຸມສຸດຍອດອາຊີ-ເອີຣົບ (ASEM) ຄັ້ງທີ IX ທີ່ນະຄອນຫຼວງວຽງຈັນ ໂອກາດດັ່ງ ກ່າວໄດ້ເຂົ້າຢ້ຽມຂໍ່ານັບພະນະທ່ານ ຈູມມະລີ ໄຊຍະສອນ ປະທານປະເທດແຫ່ງສາທາລະນະລັດ ປະຊາທິປະໄຕປະຊາຊົນລາວ ລະຫວ່າງວັນທີ 5-6 ພະຈິກ 2012 ແລະການເຂົ້າຮ່ວມກອງປະຊຸມສຸດຍອດແອັກແມັກ (ACMECS) ຄັ້ງທີ 5 ທີ່ນະຄອນຫຼວງວຽງຈັນ ລະຫວ່າງວັນທີ 12-13 ມີນາ 2013 ຂອງພະນະທ່ານ ນາງ ຍິ່ງລັກ ຊິນນະວັດ ນາຍົກລັດຖະມົນຕີແຫ່ງຣາຊະອານາຈັກໄທ. ຕະຫຼອດເຖິງການຢ້ຽມຢາມຜູ້ນຳລະດັບສູງຂອງລັດຖະບານສອງປະເທດ ກໍຄືການຢ້ຽມຢາມແລກປ່ຽນຜູ້ແທນຂັ້ນສູງຂອງແຂວງໄຊຍະບູລີ-ຈັງຫວັດອຸດຕະລະດິດ ໃນຊຸມປີຜ່ານມາ ຊຶ່ງເປັນການປະກອບສ່ວນສຳຄັນໃນການເສີມສ້າງສາຍພົວພັນ ແລະຮ່ວມມືດ້ານຕ່າງໆ ທັງເປັນການເສີມສ້າງຄວາມເຂົ້າໃຈອັນດີລະຫວ່າງປະຊາຊົນທັງສອງປະເທດໃຫ້ມີການພັດທະນາ ແລະກ້າວໜ້າຍິ່ງໆຂຶ້ນ.

**6.** ກອງປະຊຸມໄດ້ປຶກສາຫາລືບັນຫາຕ່າງໆ ຕາມລະບຽບວາລະກອງປະຊຸມ ຊຶ່ງປະກົດໃນເອກະສານຄັດຕິດໝາຍເລກ 5 ແລະ 6 ແລະກອງປະຊຸມເຫັນພ້ອມກັນວ່າ: ບົດບັນທຶກທີ່ໄດ້ເຊັນກັນໃນກອງປະຊຸມລະຫວ່າງແຂວງໄຊຍະບູລີ-ຈັງຫວັດອຸດຕະລະດິດ ຄັ້ງທີ V ວັນທີ 14 ກໍລະກົດ 2005 ທີ່ຈັງຫວັດອຸດຕະລະດິດ ຫາກຂໍ້ຄວາມໃດບໍ່ຂັດກັບບົດບັນທຶກສະບັບນີ້ ຍັງມີຜົນປະຕິບັດຕໍ່ໄປ ຊຶ່ງຜົນຂອງກອງປະຊຸມຄັ້ງນີ້ ມີດັ່ງນີ້:

**7.** <u>**ການຮ່ວມມືຮັກສາຄວາມສະຫງົບຮຽບຮ້ອຍຕາມຊາຍແດນແຂວງໄຊຍະບູລີ-ຈັງຫວັດອຸດຕະລະດິດ:**</u>

**7.1** ກອງປະຊຸມເຫັນດີໃຫ້ແຂວງໄຊຍະບູລີ ແລະຈັງຫວັດອຸດຕະລະດິດ ປະຕິບັດຕາມຂໍ້ 7.2 ຂອງບົດບັນທຶກກອງປະຊຸມຄະນະເຈົ້າແຂວງ ແລະຜູ້ວ່າຣາຊະການຈັງຫວັດຊາຍແດນລາວ-ໄທ ຄັ້ງທີ IX ວັນທີ 6-8 ມີນາ 2013 ທີ່ກຸງເທບມະຫານະຄອນ ຣາຊະອານາຈັກໄທ ວ່າດ້ວຍການຮ່ວມມືຮັກສາຄວາມສະຫງົບຮຽບຮ້ອຍຕາມບໍລິເວນຊາຍແດນລະດັບແຂວງ-ຈັງຫວັດ.

**7.2** ກອງປະຊຸມເຫັນພ້ອມກັນວ່າ ຈະບໍ່ໃຫ້ມີກຳລັງທະຫານ, ຕຳຫຼວດຂອງຝ່າຍໃດຝ່າຍໜຶ່ງລາດຕະເວນລ່ວງລ້ຳດິນແດນ, ນ່ານຟ້າ ຂອງອີກຝ່າຍໜຶ່ງຢ່າງເດັດຂາດ ທັງນີ້ກໍ່ເພື່ອຫຼີກເວັ້ນ ແລະປ້ອງກັນບໍ່ໃຫ້ມີຄວາມຂັດແຍ່ງຕາມບໍລິເວນຊາຍແດນ, ຖ້າຫາກມີບັນຫາເກີດຂຶ້ນ ທັງສອງຝ່າຍຈະຮ່ວມມືກັນແກ້ໄຂໃຫ້ລຸລ່ວງໄປດ້ວຍດີ.